ກະຊວງສາທາລະນະສຸກ

# ຈັນຍາບັນວິຊາຊີບ
# ສຳລັບທ່ານໝໍ

ສິງຫາ 2019

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0148 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງເອົາຈັນຍາບັນວິຊາຊີບສຳລັບທ່ານໝໍ

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກຳມະການວິຊາຊີບປິ່ນປົວການແພດ.

## ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

**ມາດຕາ 1.** ເຫັນດີຮັບຮອງເອົາ ຈັນຍາບັນວິຊາຊີບສຳລັບທ່ານໝໍ.

**ມາດຕາ 2.** ມອບໃຫ້ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວການແພດ ເປັນໃຈກາງ ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການເຜີຍແຜ່, ການຝຶກອົບຮົມ ຈັນຍາບັນວິຊາຊີບສຳລັບທ່ານໝໍສະບັບນີ້, ພ້ອມທັງຊຸກຍູ້ຕິດຕາມ ແລະ ກວດກາ ການເຄື່ອນໄຫວດ້ານຈັນຍາບັນຂອງທ່ານໝໍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມຈັດຕັ້ງ ແລະ ພະນັກງານ, ກົມການສຶກສາສາທາລະນະສຸກ, ບັນດາຄະນະກຳມະການວິຊາຊີບປິ່ນປົວ(ບອດ)ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ໂຮງໝໍ, ສູນ, ສະຖາບັນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1.ປະທານ, ຮອງປະທານ ສວປ ທ່ານລະ | 01 ສະບັບ |
| 2.ຄະນະກຳມະການວິຊາຊີບປິ່ນປົວການແພດ ທ່ານລະ | 01 ສະບັບ |
| 3.ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ | 01 ສະບັບ |
| 4.ຫ້ອງການກະຊວງ, ກົມກອງທີ່ກ່ຽວຂ້ອງ ບ່ອນລະ | 01 ສະບັບ |
| 5.ມວສ, ໂຮງໝໍ, ສູນ ບ່ອນລະ | 01 ສະບັບ |
| 6.ສຳເນົາໄວ້ | 02 ສະບັບ |

ກະຊວງສາທາລະນະສຸກ — ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ປອນແມກ ດາລາລອຍ

# ສາລະບານ

ໜ້າ


ຄໍານໍາ:........................................................................................................................1
ຈຸດປະສົງ:....................................................................................................................1
ອະທິບາຍຄໍາສັບ:............................................................................................................2
ຫຼັກການພື້ນຖານຂອງຈັນຍາບັນແພດ:................................................................................... 2
ຈັນຍາບັນຂອງທ່ານໝໍ:...................................................................................................3
ຄວາມເປັນມືອາຊີບໃນການປິ່ນປົວຂອງທ່ານໝໍ:.......................................................................4
ການປະຕິບັດຂອງທ່ານໝໍຕໍ່ຄົນເຈັບ:.....................................................................................5
ການປະຕິບັດຂອງທ່ານໝໍຕໍ່ທ່ານໝໍດ້ວຍກັນ ແລະ ຕໍ່ຜູ້ປະກອບວິຊາຊີບປິ່ນປົວອື່ນ:..................................6
ການປະຕິບັດຂອງທ່ານໝໍກ່ຽວກັບການໂຄສະນາ:......................................................................7
ການປະຕິບັດອື່ນໆຂອງທ່ານໝໍ:...........................................................................................7
ຂໍ້ຫ້າມສໍາລັບທ່ານໝໍ:.......................................................................................................8

# ຈັນຍາບັນວິຊາຊີບສຳລັບທ່ານໝໍ

## ຄຳນຳ

ຈັນຍາບັນວິຊາຊີບສຳລັບທ່ານໝໍສະບັບນີ້ ໄດ້ສ້າງຂຶ້ນສຳລັບທ່ານໝໍ ໃນ ສປປ ລາວ, ເນື້ອໃນຕົ້ນຕໍປະກອບດ້ວຍ: ຫຼັກການພື້ນຖານຂອງຈັນຍາບັນແພດ, ຈັນຍາບັນຂອງທ່ານໝໍ, ຄວາມເປັນມືອາຊີບໃນການປິ່ນປົວຂອງທ່ານໝໍ, ການປະຕິບັດຂອງທ່ານໝໍ ຕໍ່ ຄົນເຈັບ, ການປະຕິບັດລະຫວ່າງ ທ່ານໝໍດ້ວຍກັນ ແລະ ທ່ານໝໍກັບຜູ້ປະກອບວິຊາຊີບປິ່ນປົວອື່ນ, ການປະຕິບັດຂອງທ່ານໝໍກ່ຽວກັບການໂຄສະນາ, ການປະຕິບັດອື່ນໆຂອງທ່ານໝໍ ແລະ ຂໍ້ຫ້າມສຳລັບທ່ານໝໍ.

ວິຊາຊີບທ່ານໝໍ ເປັນວິຊາຊີບບໍລິການດ້ານສຸຂະພາບ ດ້ວຍສະຕິປັນຍາ, ຄວາມຮັບຜິດຊອບ ແລະ ຈັນຍາບັນ ເພື່ອກວດ, ຊອກຄົ້ນຫາພະຍາດ, ບົ່ງມະຕິພະຍາດ, ວາງຢາ, ປະຕິບັດເຕັກນິກການແພດ, ວາງວິທີການປິ່ນປົວ, ຟື້ນຟູໜ້າທີ່ການ, ລວມທັງການສົ່ງເສີມສຸຂະພາບ, ການກັນພະຍາດ, ແນໃສ່ເຮັດໃຫ້ຄົນເຈັບໄດ້ຟື້ນຟູສຸຂະພາບ, ຫາຍຈາກພະຍາດ ແລະ ກ້າວໄປເຖິງການມີສຸຂະພາບດີ, ແຂງແຮງ ແກ່ເພື່ອນມະນຸດດ້ວຍກັນ.

ໃນປັດຈຸບັນ, ຄວາມຈະເລີນກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີການແພດ ເຮັດໃຫ້ເກີດຜົນກະທົບຫຼາຍຢ່າງ ຕໍ່ວິຖີການດຳລົງຊີວິດຂອງມະນຸດ ລວມເຖິງສະພາບຄວາມເຈັບປ່ວຍ ທາງດ້ານຮ່າງກາຍ ແລະ ຈິດໃຈ. ວິຊາຊີບທ່ານໝໍ ຈຶ່ງມີບົດບາດສຳຄັນ ແລະ ຈຳເປັນ ຢ່າງຫຼີກລ້ຽງບໍ່ໄດ້ໃນສັງຄົມ.

ການກຳນົດ ຈັນຍາບັນສຳລັບທ່ານໝໍ ມີຈຸດປະສົງ ເພື່ອເປັນບ່ອນອີງ ໃນການປະພຶດຂອງທ່ານໝໍ, ພ້ອມທັງເປັນແນວທາງໃນການຊ່ວຍຕັດສິນໃຈໃຫ້ການປິ່ນປົວ ປົວລະບັດຮັກສາຢ່າງປອດໄພ, ຢ່າງເທົ່າທຽມ ແລະ ໃຫ້ຜົນປະໂຫຍດສູງສຸດ, ເຄົາລົບສິດທິພື້ນຖານຂອງຄົນເຈັບ, ຄອບຄົວ ແລະ ສັງຄົມ. ນອກນັ້ນ, ຈັນຍາບັນ ຍັງຊ່ວຍສົ່ງເສີມມາດຕະຖານ ຄຸນນະພາບການບໍລິການປິ່ນປົວ ໃຫ້ເປັນທີ່ຍອມຮັບ ແລະ ເຊື່ອຖືໄດ້.

ການຮັບຮູ້ ແລະ ປະຕິບັດ ຈັນຍາບັນນີ້ ແມ່ນ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງທ່ານໝໍປິ່ນປົວທຸກຄົນ ທີ່ໄດ້ຂຶ້ນທະບຽນແລ້ວ. ການບໍ່ປະຕິບັດໄປຕາມມາດຕະຖານນີ້ ຫຼື ປະຕິບັດແຕ່ບໍ່ຄົບຖ້ວນ ແລະ ບໍ່ຕໍ່ເນື່ອງ, ສາມາດມີຜົນສະທ້ອນຕໍ່ການໄດ້ຮັບ ແລະ ການຕໍ່ອາຍຸໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ.

ເນື້ອໃນຈັນຍາບັນວິຊາຊີບສຳລັບທ່ານໝໍສະບັບນີ້ ຍັງຈະໄດ້ສືບຕໍ່ພັດທະນາ ແລະ ປັບປຸງໃນຂັ້ນຕໍ່ໄປ.

## I. ຈຸດປະສົງ

1. ເພື່ອກຳນົດຫຼັກການ ແລະ ມາດຕະຖານຈັນຍາບັນຂອງທ່ານໝໍ;
2. ເພື່ອເປັນບ່ອນອີງໃຫ້ແກ່ທ່ານໝໍ ຊ່ວຍຕັດສິນໃຈປະຕິບັດຕໍ່ຜູ້ມາໃຊ້ບໍລິການ;
3. ເພື່ອປົກປ້ອງຄົນເຈັບ, ຍາດພີ່ນ້ອງຂອງຄົນເຈັບ, ຜູ້ປະກອບວິຊາຊີບທ່ານໝໍ ແລະສັງຄົມໃຫ້ມີຄວາມປອດໄພ.

## II. ອະທິບາຍຄຳສັບ

1. **ຈະຣິຍະທຳ** " Ethical Rules " ໝາຍເຖິງ ກົດເກນແນວທາງຂອງການປະພຶດທີ່ມະນຸດຄວນປະພຶດ ສົມກັບເປັນຜູ້ທີ່ມີເຫດ, ມີຜົນ ແລະ ມີຄວາມຄິດສະຕິປັນຍາ;
2. **ຈັນຍາ** " Etiquette " ໝາຍເຖິງ ກິລິຍາມາລະຍາດ ທີ່ຄວນປະພຶດໃນໝູ່ຄະນະ ເຊັ່ນ: ຈັນຍາບັນຂອງແພດ, ຈັນຍາບັນຂອງພະຍາບານ/ຜະດຸງຄັນ ແລະ ຈັນຍາບັນຂອງຄູ...;
3. **ຈັນຍາບັນ** " Code of Ethics " ໝາຍເຖິງ ການປະມວນຄວາມປະພຶດທີ່ຜູ້ປະກອບວິຊາຊີບແຕ່ລະປະເພດກຳນົດຂຶ້ນ ເພື່ອຮັກສາກຽດ, ຊື່ສຽງ ແລະ ຖານະຂອງສະມາຊິກ, ອາດຈະຂຽນເປັນລາຍລັກອັກສອນ ເຊັ່ນ: ຈັນຍາບັນແພດກໍ່ຄືການສັງລວມຄວາມປະພຶດທີ່ອີງການຈັດຕັ້ງແພດກຳນົດ ເພື່ອເປັນແນວທາງປະຕິບັດສຳລັບການປິ່ນປົວ;
4. **ສິນລະທຳ** " Moral " ໝາຍເຖິງ ຄວາມປະພຶດດີ, ຄວາມປະພຶດຖືກຕ້ອງ, ສ່ວນໃຫຍ່ແລ້ວມັກໃຊ້ໃນຄວາມໝາຍທາງສາສະໜາ ຄື ປະພຶດຕາມຫຼັກສິນທຳ;
5. **ຄຸນນະທຳ** " Virtue " ໝາຍເຖິງ ຄຸນນະພາບ, ຄຸນງາມຄວາມດີທາງຄວາມປະພຶດ ແລະ ຈິດໃຈ ເຊັ່ນ: ບໍ່ເວົ້າຕົວະ, ເສຍສະລະ, ອົດທົນ;
6. **ມະໂນທຳ** " Conscience " ໝາຍເຖິງ ຄວາມຮູ້ສຶກຜິດ, ຖືກ, ຊົ່ວ, ດີ, ຄວາມຮູ້ສຶກສິ່ງໃດຄວນເຮັດ ແລະ ບໍ່ຄວນເຮັດ;
7. **ມາລະຍາດ** " Courtesy " ໝາຍເຖິງ ການຄວບຄຸມກິລິຍາ ທ່າທີການປະພຶດ ແລະ ວາຈາຕ່າງໆ ເຊັ່ນ: ການຢືນ, ການຍ່າງ, ການນັ່ງ, ການຮັບ ແລະ ສົ່ງຂອງ, ການສະແດງຄວາມເຄົາລົບ, ການສະແດງກິລິຍາວາຈາ, ການກິນອາຫານ, ການໃຫ້ ແລະ ການຮັບບໍລິການ, ການທັກທາຍ, ການສົນທະນາ, ການໃຊ້ຄຳເວົ້າ, ການໃຊ້ເຄື່ອງມືສື່ສານ ລວມທັງການປະພຶດ ແລະ ການປະຕິບັດໃນພິທີການຕ່າງໆ;
8. **ສິດທິຂອງຄົນເຈັບ** " Right of patient " ໝາຍເຖິງ ສິດທິທັງຫຼາຍທີ່ຍອມຮັບກັນ ໃນປະເທດທີ່ມີອະຣິຍະທຳ ວ່າເປັນສິດທິພື້ນຖານທີ່ຈຳເປັນໃນການດຳລົງຊີວິດຢ່າງມີກຽດ ສົມກັບສັກສີຂອງຄວາມເປັນມະນຸດ ແລະ ຈຳເປັນໃນການພັດທະນາບຸກຄະລິກຂອງມະນຸດ, ເປັນສິດທິ ທີ່ມີການຄຸ້ມຄອງ ປົກປ້ອງໃນດ້ານກົດໝາຍເປັນພິເສດ, ຜູ້ໃດຈະລ່ວງລະເມີດຊຶ່ງກັນ ແລະ ກັນບໍ່ໄດ້, ມະນຸດເຮົາແຕ່ລະຄົນບໍ່ວ່າຈະເກີດມາໃນຊົນເຜົ່າ ຫຼື ຊົນຊາດໃດກໍ່ຕາມ ກໍ່ມີສິດທິສ່ວນຕົວທາງດ້ານຮ່າງກາຍ, ຄວາມເຊື່ອ ແລະ ການເລືອກແນວທາງການດຳລົງຊີວິດ.

## III. ຫຼັກການພື້ນຖານຂອງຈັນຍາບັນແພດ

ຈັນຍາທຳແພດ ແມ່ນ ຫຼັກການດ້ານສິນທຳ, ຊຶ່ງນຳໃຊ້ໃນການປະຕິບັດທາງການແພດ ແລະ ການຄົ້ນຄວ້າວິທະຍາສາດ. ການປະຕິບັດທາງການແພດທີ່ຖືວ່າມີຈັນຍາທຳນັ້ນ ກໍ່ຕ້ອງເຄົາລົບໃນຫຼັກການທົ່ວໄປ 4 ຂໍ້ ດັ່ງນີ້: ການເຄົາ

ລົບສິດເປັນເຈົ້າຕົນເອງຂອງຄົນເຈັບ(Autonomy), ການໃຫ້ປະໂຫຍດໃນການປິ່ນປົວແກ່ຄົນເຈັບ (Beneficence), ການບໍ່ກໍ່ຜົນຮ້າຍໃນການປິ່ນປົວແກ່ຄົນເຈັບ (Non-Maleficence) ແລະ ຄວາມຍຸຕິທຳ (Justice).

1. ການເຄົາລົບສິດເປັນເຈົ້າຕົນເອງຂອງຄົນເຈັບ ໃນການຕັດສິນໃຈຕໍ່ກິດຈະກຳທາງການແພດ (Respect to Autonomy): ການເຄົາລົບສິດໃນການມີຊີວິດໃນແຕ່ລະໄລຍະຂອງການພັດທະນາການຂອງຊີວິດ. ສິດໃນການເປັນເຈົ້າຕົນເອງຂອງຄົນເຈັບ ແມ່ນ ສິດໃນການຍອມຮັບ ຫຼື ການປະຕິເສດການປິ່ນປົວບົວລະບັດ, ຢາປົວພະຍາດ, ການຜ່າຕັດ ແລະ ອື່ນໆ. ບຸກຄົນມີສິດທີ່ຈະຄວບຄຸມສິ່ງທີ່ຈະເກີດຂຶ້ນກັບຮ່າງກາຍຂອງຕົນເອງ. ຫຼັກການນີ້ ໝາຍຄວາມວ່າ ຄົນເຈັບທີ່ໄດ້ຮັບຂໍ້ມູນຢ່າງຄົບຖ້ວນ ແລະ ຢູ່ໃນສະພາບສະຕິປັນຍາສົມບູນ, ສາມາດຍອມຮັບ ຫຼື ປະຕິເສດ ການປິ່ນປົວຕາມຄວາມປະສົງຂອງຕົນເອງ (informed consent). ການຕັດສິນໃຈດັ່ງກ່າວ ຄວນໄດ້ຮັບຄວາມເຄົາລົບຈາກທຸກຝ່າຍ. ເພື່ອຮັກສາສິດເປັນເຈົ້າຕົນເອງ, ກໍຕ້ອງມີການຮັກສາຄວາມລັບຂອງຄົນເຈັບຢ່າງເຄັ່ງຄັດ (Confidentiality). ຄົນເຈັບມີສິດທີ່ຈະໄດ້ຮັບຂໍ້ມູນ ແລະ ຄຳບອກເລົ່າທີ່ເປັນຈິງ ກ່ຽວກັບສະພາບຄວາມເຈັບເປັນຂອງເຂົາ (Truth-telling).
2. ການໃຫ້ປະໂຫຍດໃນການປິ່ນປົວແກ່ຄົນເຈັບ (Beneficience) ທ່ານໝໍ ຕ້ອງພະຍາຍາມປະຕິບັດໃຫ້ໄດ້ຮັບຜົນດີທີ່ສຸດສຳລັບຄົນເຈັບ, ແຕ່ຄວນພິຈາລະນາເປັນກໍລະນີໄປ.
3. ການບໍ່ກໍ່ຜົນຮ້າຍໃນການປິ່ນປົວແກ່ຄົນເຈັບ (Non-maleficience) ທ່ານໝໍ ຕ້ອງຊັ່ງຊາໃຫ້ໄດ້ວ່າການປິ່ນປົວແມ່ນມີຜົນດີຢ່າງແນ່ນອນເມື່ອທຽບກັບຜົນຮ້າຍທີ່ຈະເກີດຂຶ້ນ. ບາງຄັ້ງການປິ່ນປົວແມ່ນເຈດຕະນາຢາກໃຫ້ເກີດຜົນດີ, ແຕ່ສາມາດເກີດຜົນຮ້າຍໂດຍບໍ່ເຈດຕະນາໄດ້ ເອີ້ນວ່າ "double effect". ເພື່ອຈະສາມາດຊັ່ງຊາໄດ້ວ່າການເກີດຜົນດີຫຼາຍກວ່າຜົນຮ້າຍ, ທ່ານໝໍຕ້ອງມີຄວາມຮູ້, ຄວາມສາມາດ ແລະ ຈັນຍາທຳ ພ້ອມທັງພັດທະນາວິຊາຊີບຢູ່ສະເໝີ. ຢາກເຮັດໄດ້ແນວນັ້ນ ມັນຮຽກຮ້ອງເຖິງ ການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແລະ ການຮຽນຮູ້ຕະຫຼອດຊີວິດ (Live-long learning).
4. ຄວາມຍຸຕິທຳ (Justice): ຫຼັກການ 3 ຢ່າງຂ້າງເທິງນັ້ນ ຮຽກຮ້ອງໃຫ້ທ່ານໝໍມີຄວາມຍຸຕິທຳໃນທຸກສະຖານະການຂອງການປິ່ນປົວ ໂດຍບໍ່ຈຳແນກຕາມສະຖານະພາບຕ່າງໆຂອງຄົນເຈັບ ແລະ ຕອບສະໜອງເວດຊະພັນຢ່າງເທົ່າທຽມກັນ ໃນສະພາບການທີ່ຂາດແຄນ.

## IV. ຈັນຍາບັນຂອງທ່ານໝໍ

ໃນການບໍລິການປິ່ນປົວ ທ່ານໝໍ ຕ້ອງປະຕິບັດ ດັ່ງນີ້:

1. ເຄົາລົບສິດທິມະນຸດ ແລະ ກຽດສັກສີຂອງຄົນເຈັບ ຫຼື ຍາດພີ່ນ້ອງຂອງຄົນເຈັບ ໂດຍບໍ່ຈຳແນກເຊື້ອຊາດ, ອາຍຸ , ເພດ, ອາຊີບ, ສາສະໜາ ແລະ ອື່ນໆ, ລວມທັງບໍ່ທຳລາຍກຽດສັກສີ ແລະ ຊື່ສຽງຂອງຜູ້ທີ່ລ່ວງລັບໄປແລ້ວ.
2. ຊ່ວຍເຫຼືອເບື້ອງຕົ້ນ ແກ່ຄົນເຈັບທີ່ຕົກຢູ່ໃນອັນຕະລາຍດ້ວຍຄວາມບໍລິສຸດໃຈ ເມື່ອຕົນມີເງື່ອນໄຂຊ່ວຍໄດ້ ໂດຍບໍ່ປະຕິເສດ ຫຼື ຫຼົບຫຼີກ ການຊ່ວຍເຫຼືອດັ່ງກ່າວ.

3. ປະຕິບັດຕາມມາດຕະຖານເຕັກນິກການປິ່ນປົວ ທີ່ຖືກຮັບຮູ້ ທັງພາຍໃນ ແລະ ຕ່າງປະເທດ, ເພື່ອຊ່ວຍຄົນເຈັບຟື້ນຟູສຸຂະພາບ.
4. ຮັບຟັງຄວາມຄິດເຫັນ ແລະ ປະຕິບັດຕາມ ຈຸດປະສົງ ແລະ ການຕັດສິນໃຈຂອງຄົນເຈັບ ບົນພື້ນຖານ ຂອງກົດໝາຍ ແລະ ລະບຽບການ.
5. ລະດົມຄົນເຈັບໃຫ້ຄວາມຮ່ວມມືໃນການປິ່ນປົວ, ທັງໃຫ້ກຳລັງໃຈແກ່ຄົນເຈັບ ເພື່ອຜົນປະໂຫຍດຂອງຄົນເຈັບເອງເປັນຕົ້ນຕໍ, ແຕ່ຫາກບໍ່ແມ່ນເພື່ອຜົນປະໂຫຍດ ຂອງທ່ານໝໍຜູ້ປິ່ນປົວ.
6. ມີຄວາມມານະອົດທົນ, ມີມະນຸດສຳພັນທີ່ດີ, ມີເມດຕາອາລີ, ສຸພາບຮຽບຮ້ອຍ, ບໍ່ມີອະຄະຕິ ຫຼືບໍ່ມີປະຕິກິລິຍາຕໍ່ຄຳເວົ້າ ແລະ ການສະແດງອອກທີ່ບໍ່ເໝາະສົມຂອງຄົນເຈັບໃນຂະນະເຈັບເປັນ ແລະ ຍາດພີ່ນ້ອງຂອງຄົນເຈັບ.
7. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທຳ, ມີສະຕິ ແລະ ມີຄວາມຮັບຜິດຊອບສູງ.
8. ເຄົາລົບນັບຖື ແລະ ສາມັກຄີ ກັບເພື່ອນຮ່ວມວິຊາຊີບດຽວກັນ.
9. ເກັບຄ່າບໍລິການປິ່ນປົວ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍບໍ່ຮຽກຮ້ອງຄຸນຄ່າເພີ່ມເຕີມໃດໆ.

## V. ຄວາມເປັນມືອາຊີບໃນການປິ່ນປົວຂອງທ່ານໝໍ

ທ່ານໝໍ ຕ້ອງຍົກສູງຄວາມເປັນມືອາຊີບໃນການປິ່ນປົວ ດັ່ງນີ້:

1. ທ່ານໝໍ ຕ້ອງເຄົາລົບຕໍ່ຮີດຄອງປະເພນີອັນດີງາມ, ກົດໝາຍບ້ານເມືອງ, ບໍ່ປະພຶດໃນສິ່ງທີ່ຈະເຮັດໃຫ້ເຊື່ອມເສຍກຽດສັກສີຂອງວິຊາຊີບປິ່ນປົວ, ປະກອບວິຊາຊີບດ້ວຍຄວາມສັດຊື່ສຸດຈະລິດ ແລະ ເຈດຕະນາດີ.
2. ການປະກອບວິຊາຊີບ ບໍ່ວ່າຈະເປັນສ່ວນຕົວ ຫຼື ທາງການ, ທ່ານໝໍ ຄວນເຄົາລົບຮ່າງກາຍ, ຊີວິດ, ສັກສີ ແລະ ຄຸນຄ່າຂອງຄົນ, ເພື່ອຜົນປະໂຫຍດຂອງຄົນເຈັບ, ຄວນຮັກສາຄວາມລັບຂອງຄົນເຈັບ, ຮັກສາສັກສີຂອງຄວາມເປັນມືອາຊີບໄວ້ຕະຫຼອດເວລາ, ໃຫ້ຄວາມເຄົາລົບສິດທິຂອງຄົນເຈັບ ໃນການເລືອກທ່ານໝໍຢ່າງມີອິດສະລະ.
3. ທ່ານໝໍ ຕ້ອງໃຫ້ຄວາມສະດວກໃນທຸກໆສະຖານະການ, ທ່ານໝໍ ຕ້ອງມີພຶດຕິກຳທີ່ເໝາະສົມ, ເພື່ອຊ່ວຍເຫຼືອ ແລະ ສະໜັບສະໜູນ ຜູ້ປະກອບວິຊາຊີບປິ່ນປົວດ້ວຍກັນ ທີ່ ປະຕິບັດຕໍ່ຄົນເຈັບ, ແຕ່ງກາຍສຸພາບຮຽບຮ້ອຍຕາມກາລະເທສະ.
4. ທ່ານໝໍ ຕ້ອງມີສ່ວນຮ່ວມໃນການໃຫ້ຂໍ້ມູນຂ່າວສານກ່ຽວກັບການສຶກສາທາງດ້ານສາທາລະນະສຸກ ໂດຍຜ່ານຊ່ອງທາງການສື່ສານໃນການເຜີຍແຜ່ອອກສູ່ປະຊາຊົນດ້ວຍວິທີໃດກໍ່ຕາມ, ຄວນກ່າວເຖິງຂໍ້ມູນທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນແລ້ວ ເທົ່ານັ້ນ; ຄວນເວົ້າຢ່າງລະອຽດຖີ່ຖ້ວນ ແລະ ຄຳນຶງເຖິງຜົນກະທົບຕໍ່ປະຊາຊົນ, ຄວນຫຼີກເວັ້ນການເປີດເຜີຍ ຕໍ່ສາທາລະນະ ເພື່ອຜົນປະໂຫຍດຂອງຕົນ ຫຼື ອົງກອນທີ່ຕົນສັງກັດ.
5. ໃນການສຶກສາຄົ້ນຄວ້າ, ວິໄຈ, ການເຈາະເລືອດ, ຜ່າຕັດອະໄວຍະວະ, ຈຸລັງ ຫຼື ພາກສ່ວນອື່ນໆ ຂອງຮ່າງກາຍມະນຸດທີ່ຍັງມີຊີວິດຢູ່ ຫຼື ເສຍຊີວິດແລ້ວກໍ່ຕາມ ການກະທຳດັ່ງກ່າວ ລ້ວນແຕ່ເຮັດໄດ້ສະເພາະພາຍໃຕ້ກົດໝາຍ ແລະ ລະບຽບການກຳນົດໄວ້ເທົ່ານັ້ນ.

6. ທ່ານໝໍ ສາມາດປະຕິບັດຕາມການຮ້ອງຂໍໃນກໍລະນີການສະໝັກໃຈ ແລະ ເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການເທົ່ານັ້ນ ແລະ ທ່ານໝໍ ມີສິດເສລີພາບທີ່ບໍ່ຍອມຮັບຄຳຮ້ອງຂໍ ແລະ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ກ່ຽວກັບເງື່ອນໄຂຕາມກົດໝາຍ ແລະ ລະບຽບການກຳນົດ.
7. ທ່ານໝໍ ຕ້ອງປະຕິບັດຕົນຢ່າງມີຈັນຍາທຳ ໂປ່ງໃສ ບໍ່ປະສົງເພື່ອທຸລະກິດການຄ້າ ໃນການໂຄສະນາເກີນຄວາມເປັນຈິງໂດຍເຈດຕະນາ ຫຼື ບໍ່ເຈດຕະນາກໍ່ຕາມ, ບໍ່ຄວນອະນຸຍາດໃຫ້ຄົນໃດຄົນໜຶ່ງໃຊ້ຊື່ ຫຼື ຮູບຂອງຕົນເຜີຍແຜ່ ເພື່ອຈຸດປະສົງດັ່ງກ່າວ.
8. ທ່ານໝໍ ຕ້ອງບໍ່ໃຫ້ນຳໃຊ້ອຸປະກອນທາງການແພດ ຫຼື ຜະລິດຕະພັນທາງການແພດທີ່ບໍ່ໄດ້ຜ່ານການກວດສອບຢ່າງຊັດເຈນ.
9. ທ່ານໝໍຕ້ອງພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແລະ ຮຽນຮູ້ຕະຫຼອດຊີວິດ.

## VI. ການປະຕິບັດຂອງທ່ານໝໍ ຕໍ່ ຄົນເຈັບ

1. ກ່ອນໃຫ້ການປິ່ນປົວ ທ່ານໝໍ ຕ້ອງໃຫ້ຂໍ້ມູນທີ່ຄົບຖ້ວນຊັດເຈນ ເພື່ອຈະໄດ້ຮັບການຍິນຍອມຈາກຄົນເຈັບ ຫຼື ພີ່ນ້ອງຄົນເຈັບ.
2. ທ່ານໝໍ ຕ້ອງໃຫ້ການປິ່ນປົວຢ່າງສະເໝີພາບ, ຍຸດຕິທຳ, ມີຄຸນນະພາບ ແລະ ຖືກຕ້ອງຕາມຫຼັກວິທະຍາສາດການແພດ ລວມທັງຫຼັກການ ການຂ້າເຊື້ອ, ອະເຊື້ອ ແລະ ຄວາມປອດໄພ ຂອງຄົນເຈັບ.
3. ທ່ານໝໍ ຕ້ອງສື່ສານກັບຄົນເຈັບຢ່າງມີປະສິດທິພາບ, ມີມະນຸດສຳພັນທີ່ດີ.
4. ທ່ານໝໍ ຕ້ອງປິ່ນປົວດ້ວຍຄວາມເຄົາລົບຕໍ່ສິດທິຂອງຄົນເຈັບ ຕະຫຼອດເວລາ.
5. ທ່ານໝໍ ຕ້ອງກວດພະຍາດໃຫ້ຄົນເຈັບດ້ວຍສະຕິ ແລະ ຄວາມຮັບຜິດຊອບສູງ, ວ່ອງໄວ, ພ້ອມທັງ ບັນທຶກຂໍ້ມູນຕ່າງໆຂອງຄົນເຈັບ, ໂດຍໃຊ້ຄວາມຮູ້, ປະສົບການ, ສະຕິປັນຍາ, ເຄື່ອງມື ແລະ ອຸປະກອນການແພດ, ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ເໝາະສົມ, ເພື່ອເປັນບ່ອນອີງໃຫ້ແກ່ການບົ່ງມະຕິພະຍາດທີ່ຊັດເຈນ, ກຳນົດວິທີການປິ່ນປົວ ແລະ ຊ່ວຍຟື້ນຟູສຸຂະພາບ ຂອງຄົນເຈັບ.
6. ໃນຂະນະກວດຄົນເຈັບ ທ່ານໝໍ ຕ້ອງຄຳນຶງເຖິງເວລາທີ່ຈຳເປັນ ເພື່ອໃຫ້ໄດ້ຮັບຂໍ້ມູນ ແລະ ບົ່ງມະຕິ ໂດຍນຳໃຊ້ວິທີທາງການແພດທີ່ມີຫຼັກຖານອ້າງອີງ.
7. ທ່ານໝໍ ຕ້ອງແນະນຳໃຫ້ຄົນເຈັບຮູ້ກ່ຽວກັບ ສະພາບການເຈັບເປັນຂອງຜູ້ກ່ຽວ ຫຼັງຈາກການກວດ, ການບົ່ງມະຕິ ພ້ອມທັງແນະນຳ ວິທີການປິ່ນປົວໃຫ້ຄົນເຈັບຮູ້ ແລະ ປະຕິບັດຢ່າງຖືກຕ້ອງ.
8. ທ່ານໝໍ ຕ້ອງພິຈາລະນາຄວາມສົມດູນ ຂອງຜົນປະໂຫຍດ ແລະ ຜົນເສຍຫາຍ ທີ່ອາດຈະເກີດຂຶ້ນຈາກການປິ່ນປົວ.
9. ທ່ານໝໍ ຕ້ອງຊີ້ແຈງ, ອະທິບາຍກ່ຽວກັບຜົນການກວດ, ການບົ່ງມະຕິ, ການປິ່ນປົວ, ການບົວລະບັດ, ການລ້ຽງດູ, ການຟື້ນຟູ, ການກັນພະຍາດ, ຄວາມສ່ຽງ, ຜົນຮ້າຍ, ລະດັບຄວາມຮ້າຍແຮງ, ຄວາມຫຍຸ້ງຍາກ, ຄວາມອາດສາມາດເປັນໄປໄດ້ທີ່ຈະນຳໃຊ້ວິທີການອື່ນ ຫຼື ທ່າອ່ຽງທີ່ຫຼີກລ່ຽງບໍ່ໄດ້ ຈາກການປິ່ນປົວ.

10. ໃນກໍລະນີຄົນເຈັບປະຕິເສດການປິ່ນປົວ ແລະ ບໍ່ໃຫ້ການຮ່ວມມື, ທ່ານໝໍ ຕ້ອງໃຫ້ຄວາມເຄົາລົບ ໃນການຕັດສິນໃຈຂອງຄົນເຈັບ, ແຕ່ຕ້ອງອະທິບາຍຜົນສະທ້ອນຂອງການປະຕິເສດດັ່ງກ່າວ, ຖ້າຫາກຄົນເຈັບບໍ່ຍິນຍອມ ທ່ານໝໍ ກໍ່ບໍ່ສາມາດປິ່ນປົວໄດ້ ໂດຍບໍ່ມີຄອບຄົວຂອງຄົນເຈັບ, ຍົກເວັ້ນໃນກໍລະນີສຸກເສີນ, ຄົນເຈັບໝົດສະຕິ ຫຼື ບໍ່ສາມາດຕິດຕໍ່ຄອບຄົວຂອງຄົນເຈັບໄດ້.
11. ທ່ານໝໍ ຕ້ອງຂຽນໃບສັ່ງຢາໃຫ້ຖືກຕ້ອງ, ຈະແຈ້ງ, ຊັດເຈນ ແລະ ອ່ານອອກໄດ້ ເພື່ອໃຫ້ຄົນເຈັບ ຫຼື ພີ່ນ້ອງຄົນເຈັບສາມາດປະຕິບັດຕາມຄໍາແນະນໍາທີ່ຖືກຕ້ອງ, ແນໃສ່ເຮັດໃຫ້ການປິ່ນປົວດໍາເນີນໄປຢ່າງຖືກວິທີ, ຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຄົນເຈັບ.
12. ກໍລະນີມີການປ່ຽນແປງ ສະຖານທີ່ບໍລິການປິ່ນປົວນັ້ນ, ທ່ານໝໍ ຕ້ອງແຈ້ງຄວາມສ່ຽງ ກ່ຽວກັບ ສະພາບຄວາມເຈັບເປັນ ພ້ອມທັງສິ່ງບົດບັນທຶກການປິ່ນປົວ ໃຫ້ສະຖານທີ່ບໍລິການປິ່ນປົວບ່ອນໃໝ່.
13. ທ່ານໝໍ ຕ້ອງອໍານວຍຄວາມສະດວກ ໃຫ້ແກ່ຄົນເຈັບທີ່ໄດ້ຮັບຮອງທາງດ້ານປະກັນສຸຂະພາບ ແຕ່ຕ້ອງປະຕິບັດພາຍໃຕ້ເງື່ອນໄຂ ທີ່ກົດໝາຍກໍານົດໄວ້;
14. ທ່ານໝໍ ມີສິດທີ່ຈະປົດບັງຄົນເຈັບ ກ່ຽວກັບພະຍາດ ຫຼື ມະຕິພະຍາດ, ຍົກເວັ້ນກໍລະນີສ່ຽງຕໍ່ການຕິດເຊື້ອຈາກຄົນອື່ນ ຫຼື ແຜ່ເຊື້ອໃຫ້ກັບຄົນອື່ນ.
15. ກໍລະນີຮ້າຍແຮງ, ທ່ານໝໍ ຕ້ອງສະໜອງຂໍ້ມູນໃຫ້ຄົນເຈັບ ດ້ວຍຄວາມລະມັດລະວັງ, ມີຂັ້ນຕອນ ເພື່ອບໍ່ກະທົບກະເທືອນທາງດ້ານຈິດໃຈຕໍ່ຄົນເຈັບ, ຄອບຄົວຂອງຄົນເຈັບ ສາມາດຮູ້ໄດ້ເຖິງຂໍ້ມູນດັ່ງກ່າວ, ຍົກເວັ້ນຄົນເຈັບບໍ່ອະນຸຍາດ.
16. ຄົນເຈັບທີ່ມານອນປິ່ນປົວຢູ່ໂຮງໝໍ ຈະມີຄວາມຫຍຸ້ງຍາກລໍາບາກ ຫຼື ທົນທຸກທໍລະມານ ແລະ ສະບຽງອາຫານບໍ່ພຽງພໍ, ທ່ານໝໍ ຄວນໃຊ້ວິທີທີ່ເໝາະສົມ ແລະ ມີເຫດຜົນເພື່ອອະທິບາຍໃຫ້ຄົນເຈັບ ແລະ ພີ່ນ້ອງເຂົ້າໃຈ.
17. ທ່ານໝໍ ຕ້ອງເອົາໃຈໃສ່ປະຕິບັດມາດຕະການ ດ້ານສຸຂະອະນາໄມ ແລະ ການຄວບຄຸມການຕິດເຊື້ອ, ທ່ານໝໍຕ້ອງແຈ້ງໃຫ້ຄົນເຈັບຮູ້ ກ່ຽວກັບຄວາມຮັບຜິດຊອບຕົນເອງ ແລະ ຄົນອື່ນ.
18. ກ່ອນຈະສິດສອນດ້ານຄລີນິກທີ່ເອົາຄົນເຈັບເຂົ້າຮ່ວມ, ຕ້ອງຮັບປະກັນວ່າຄົນເຈັບໄດ້ຮັບຂໍ້ມູນພຽງພໍ ແລະ ຍິນຍອມປະກອບສ່ວນໃນກິດຈະກໍາດັ່ງກ່າວ.
19. ໃນການສະແດງຄວາມຄິດຄວາມເຫັນອອກທາງການສື່ສັງຄົມ (Social media) ທ່ານໝໍຕ້ອງຄໍານຶງເຖິງຈັນຍາບັນແພດ ເຊັ່ນດຽວກັນ.

## VII. ການປະຕິບັດຂອງທ່ານໝໍ ຕໍ່ ທ່ານໝໍດ້ວຍກັນ ແລະ ຕໍ່ຜູ້ປະກອບວິຊາຊີບປິ່ນປົວອື່ນ

1. ທ່ານໝໍ ຕ້ອງມີການພົວພັນທີ່ດີ ລະຫວ່າງທ່ານໝໍດ້ວຍກັນ ເພື່ອເພີ່ມປະສິດທິພາບໃນການປິ່ນປົວ.
2. ທ່ານໝໍ ຕ້ອງສື່ສານ ຢ່າງຊັດເຈນ, ມີປະສິດທິຜົນ ລະຫວ່າງການປິ່ນປົວ ແລະ ມີສ່ວນຮ່ວມໃນການ ຕິດຕາມຄົນເຈັບ.
3. ທ່ານໝໍ ຕ້ອງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນສະຖານະການສຸກເສີນ ແລະ ຫຍຸ້ງຍາກສັບສົນ.

4. ໃນສະຖານະການທີ່ສຳຄັນ ທ່ານໝໍ ຕ້ອງປຶກສາຫາລືດ້ວຍກັນ ຫຼື ກັບທ່ານໝໍ ທີ່ຖືກແນະນຳໂດຍຄົນເຈັບ ຫຼື ພີ່ນ້ອງຄົນເຈັບ.
5. ທ່ານໝໍ ທີ່ຮັບຜິດຊອບຄົນເຈັບເຂົ້ານອນໂຮງໝໍ ຕ້ອງແຈ້ງທ່ານໝໍປະຈຳຕົວ ຫຼື ພີ່ນ້ອງຄົນເຈັບເພື່ອໄດ້ຮັບອະນຸຍາດປິ່ນປົວ ແລະ ຄວນແຈ້ງໃຫ້ພວກເພິ່ນຮູ້ ກ່ຽວກັບ ການຕັດສິນໃຈທີ່ສຳຄັນສຳລັບການປິ່ນປົວຄົນເຈັບ ໂດຍບໍ່ມີການລະເມີດຂໍ້ກຳນົດກ່ຽວກັບການບໍລິການທາງການແພດຂອງໂຮງໝໍລັດ ຫຼື ໂຮງໝໍເອກະຊົນ.
6. ໃນການເຮັດວຽກເປັນໝູ່ຄະນະຂອງທ່ານໝໍ, ການກວດ, ບົ່ງມະຕິ ແລະ ປິ່ນປົວຄົນເຈັບ ຕ້ອງໃຫ້ຂໍ້ມູນແກ່ກັນ ແລະ ກັນ ຢ່າງຊັດເຈນ, ທຸກຄົນມີໜ້າທີ່ຮັບຜິດຊອບ ແລະ ຕິດຕາມຄວາມຄືບໜ້າເຖິງຜົນຂອງການປິ່ນປົວຄົນເຈັບ.
7. ເພື່ອຜົນປະໂຫຍດຂອງຄົນເຈັບ, ທ່ານໝໍ ຕ້ອງຮັກສາການພົວພັນທີ່ດີ ກັບສະມາຊິກວິຊາຊີບປິ່ນປົວອື່ນໆ, ສະມາຊິກທຸກຄົນຕ້ອງໃຫ້ຄວາມເຄົາລົບເຊິ່ງກັນແລະກັນ, ເຄົາລົບໃນສິດເສລີພາບໃນການເລືອກຂອງຄົນເຈັບ.
8. ທ່ານໝໍ ຕ້ອງປິ່ນປົວແບບມືອາຊີບ ຮ່ວມກັບເພື່ອນຮ່ວມງານດ້ວຍກັນ ແລະ ຜູ້ປະກອບວິຊາຊີບປິ່ນປົວອື່ນໆ ລວມທັງໃນເວລາທີ່ນຳໃຊ້ສື່ສັງຄົມ.

## VIII. ການປະຕິບັດຂອງທ່ານໝໍກ່ຽວກັບການໂຄສະນາ

ກ່ຽວກັບການໂຄສະນາ ທ່ານໝໍຕ້ອງປະຕິບັດ ດັ່ງນີ້:

1. ບໍ່ໂຄສະນາເຜີຍແຜ່ ໃນສະຖານທີ່ບໍລິການສາທາລະນະສຸກ ກ່ຽວກັບ ການວິໄຈ ຫຼື ການປິ່ນປົວ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນ ຈາກກະຊວງສາທາລະນະສຸກ.
2. ບໍ່ໂຄສະນາອຸປະກອນ, ເຄື່ອງມືທີ່ທັນສະໄໝ ເພື່ອຊັກຈູງໃຈໃຫ້ປະຊາຊົນ ເຂົ້າໃຈຜິດ ໂດຍທີ່ບໍ່ຖືກຕ້ອງຕາມມາດຕະຖານຂອງຫຼັກວິຊາການ ຫຼື ເຮັດໃຫ້ປະຊາຊົນ ເກີດຄວາມຄາດຫວັງເກີນຄວາມເປັນຈິງ.
3. ບໍ່ໂຄສະນາລັກສະນະເປັນສື່ລາມົກ ທີ່ບໍ່ສຸພາບຕໍ່ປະຊາຊົນ ຫຼື ໂຄສະນາໃນສິ່ງທີ່ຜິດຕໍ່ສິນທຳ, ຮີດຄອງປະເພນີຂອງຊາດ.

## IX. ການປະຕິບັດອື່ນໆ ຂອງທ່ານໝໍ

1. ການຄົ້ນຄວ້າດ້ານຄລີນິກ
   1) ຮັບປະກັນວ່າການຄົ້ນຄວ້າໃດທີ່ທ່ານມີສ່ວນຮ່ວມນັ້ນ ໄດ້ມີການປະເມີນທາງດ້ານວິທະຍາສາດ ແລະ ດ້ານຈັນຍາທຳ, ໄດ້ຖືກຮັບຮອງຈາກຄະນະກຳມະການທີ່ກ່ຽວຂ້ອງ ແລະ ໄດ້ມີການວາງແຜນ ແລະ ມີການຊີ້ນຳຢ່າງດີ. ຜູ້ເຂົ້າຮ່ວມການຄົ້ນຄວ້າຈະບໍ່ໄດ້ຮັບຜົນຮ້າຍ ທີ່ບໍ່ກ້ຳເກິ່ງກັນກັບຜົນປະໂຫຍດ.
   2) ໃຫ້ຂໍ້ມູນແກ່ຜູ້ທີ່ເຂົ້າຮ່ວມການຄົ້ນຄວ້າ ກ່ຽວກັບ ຈຸດປະສົງຂອງການຄົ້ນຄວ້າ, ແຫຼ່ງທີ່ມາຂອງທຶນ, ຜົນຮ້າຍ ແລະ ຜົນປະໂຫຍດທີ່ອາດຈະເກີດຂຶ້ນ ແລະ ສະຖານະໃນການເຂົ້າຮ່ວມຂອງພວກເພິ່ນ.

3) ກ່ອນດຳເນີນການຄົ້ນຄວ້າ, ຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ເຂົ້າຮ່ວມ ຫຼັງຈາກໄດ້ຮັບຂໍ້ມູນຢ່າງຄົບຖ້ວນ ແລະ ໃຫ້ຄຳແນະນຳວ່າພວກເພິ່ນສາມາດຖອນໂຕຈາກການຄົ້ນຄວ້າເວລາໃດກໍ່ໄດ້ ໂດຍປາດສະຈາກອະຄະຕິຕໍ່ການປິ່ນປົວທີ່ກຳລັງດຳເນີນຢູ່ນັ້ນ.

2. **ການພັດທະນາວິຊາຊີບປິ່ນປົວແບບຕໍ່ເນື່ອງ**

ທ່ານໝໍ ຕ້ອງພັດທະນາຄວາມຮູ້ ຄວາມສາມາດຂອງຕົນຢ່າງຕໍ່ເນື່ອງ, ເຂົ້າຮ່ວມການຝຶກອົບຮົມ, ການປະຕິບັດກິດຈະກຳຕ່າງໆ ແລະ ການປະເມີນ ກ່ຽວກັບ ຄວາມສາມາດຕົວຈິງໃນການປະຕິບັດວິຊາຊີບຂອງຕົນ, ເພື່ອຍົກສູງຄຸນນະພາບຂອງການກວດ, ການບົ່ງມະຕິພະຍາດ ແລະ ການປິ່ນປົວ ໃຫ້ທັນກັບຄວາມກ້າວໜ້າທາງດ້ານວິທະຍາສາດການແພດ ຕາມຍຸກສະໄໝ, ເພື່ອຄວາມປອດໄພ ແລະ ຜົນປະໂຫຍດຂອງຄົນເຈັບ.

3. **ການອອກໃບຢັ້ງຢືນຕ່າງໆທາງການແພດ**

ໃບຢັ້ງຢືນທາງການແພດປະກອບດ້ວຍ: ໃບຢັ້ງຢືນສຸຂະພາບ, ໃບຢັ້ງຢືນການເກີດ, ໃບຢັ້ງຢືນການເສຍຊີວິດ, ໃບຢັ້ງຢືນການເສຍອົງຄະ ແລະ ໃບຢັ້ງຢືນອື່ນໆ, ຊຶ່ງອອກໃຫ້ໂດຍທ່ານໝໍ ເພື່ອນຳໃຊ້ເປັນຫຼັກຖານດ້ານກົດໝາຍ; ໃບຢັ້ງຢືນທາງການແພດ ຕ້ອງໃຫ້ຖືກຕ້ອງຕາມຄວາມເປັນຈິງ, ເນື້ອໃນຂໍ້ມູນຖືກຕ້ອງຊັດເຈນ ແລະ ບໍ່ລະເວັ້ນ ບາງຂໍ້ມູນທີ່ກ່ຽວຂ້ອງ, ໃຫ້ຄວາມເຂົ້າໃຈ ແລະ ບໍ່ໃຫ້ຄຳເຫັນເກີນຂອບເຂດ, ໃຫ້ຫຼັກຖານຕາມຫຼັກການວິທະຍາສາດການແພດ ແລະ ຕາມແບບພິມໃບຢັ້ງຢືນທາງການແພດ ທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງໆ.

4. **ການປະກອບວິຊາຊີບປິ່ນປົວຢູ່ຫ້ອງກວດພະຍາດເອກະຊົນ**

1) ຜູ້ປະກອບວິຊາຊີບປິ່ນປົວສາມາດມີຫ້ອງກວດພະຍາດເອກະຊົນບ່ອນດຽວ, ຄວນມີຫ້ອງກວດທີ່ເໝາະສົມ, ມີບຸກຄະລາກອນທາງການແພດ ທີ່ມີຄວາມຮູ້ ຄວາມສາມາດພຽງພໍ, ເອົາໃຈໃສ່ ກ່ຽວກັບ ມາດຕະຖານການອະເຊື້ອ ໂດຍປະຕິບັດຕາມລະບຽບການທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

2) ໃນກໍລະນີ ເຈົ້າຂອງຫ້ອງກວດພະຍາດເສຍຊີວິດ ຫຼື ຕິດຂັດ ບໍ່ສາມາດດຳເນີນກິດຈະການໄດ້, ຜູ້ປະກອບວິຊາຊີບປິ່ນປົວອື່ນທີ່ປະສົງນຳໃຊ້ສະຖານທີ່ດັ່ງກ່າວຕ້ອງໄດ້ປະກອບສຳນວນຄຳຮ້ອງຂໍອະນຸຍາດ ຕາມລະບຽບຫຼັກການ, ເມື່ອໄດ້ຮັບອະນຸມັດແລ້ວ ຈຶ່ງມີສິດດຳເນີນກິດຈະການຕໍ່ໄດ້.

## X. ຂໍ້ຫ້າມສຳລັບທ່ານໝໍ

ຫ້າມທ່ານໝໍ ມີພຶດຕິກຳ ດັ່ງນີ້:

1. ບໍ່ກຽມພ້ອມປະຕິບັດໜ້າທີ່, ບໍ່ຮັບຕ້ອນຄົນເຈັບ ຫຼື ຍາດພີ່ນ້ອງຄົນເຈັບ, ບໍ່ໃຫ້ຄວາມສະດວກ ໃນແຕ່ລະຂັ້ນຕອນຂອງການບໍລິການປິ່ນປົວ, ບໍ່ມາປະຈຳການ ຕາມລະບອບການປະຈຳການ, ຢຸດເຊົາປິ່ນປົວ ຕາມການສະເໜີຂອງຄົນເຈັບ ແລະ ພີ່ນ້ອງຂອງຄົນເຈັບ ໂດຍ ບໍ່ມີເຫດຜົນ.

2. ເອົາຜົນກຳໄລ ເປັນຕົ້ນຕໍຄືກັບການຄ້າ, ຖ່ວງດຶງຄົນເຈັບໄວ້ຍາວນານ ໂດຍບໍ່ຈຳເປັນ, ໂຄສະນາເກີນຄວາມຈິງ ດ້ວຍຮູບການຕ່າງໆເພື່ອໃຫ້ຄົນເຈັບມາປິ່ນປົວນຳຕົນ, ວິພາກວິຈານ ໃສ່ຮ້າຍປ້າຍສີ ການປິ່ນປົວຂອງທ່ານໝໍອື່ນ.
3. ເຮັດບົດລາຍງານ ຫຼື ອອກໃບຢັ້ງຢືນການແພດ ໂດຍມີການສົມຮູ້ຮ່ວມຄິດ ກັບຄົນເຈັບ ຫຼື ບຸກຄົນອື່ນ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ, ຊຶ່ງເປັນການລະເມີດ ຕໍ່ກົດໝາຍ ແລະ ລະບຽບການ.
4. ສົ່ງເສີມ ຫຼື ຊື້-ຂາຍ ຜະລິດຕະພັນ ຫຼື ອະໄວຍະວະໃດໜຶ່ງ ຈາກຮ່າງກາຍຂອງມະນຸດ ເຊັ່ນ: ເລືອດ, ອົງຄະ, ຈີວະ, ຈຸລັງ ຫຼື ຜະລິດຕະພັນ ຈາກຮ່າງກາຍຂອງມະນຸດ ທີ່ຍັງມີຊີວິດຢູ່ ຫຼື ເສັຍຊີວິດແລ້ວ, ຍົກເວັ້ນກໍລະນີທີ່ກົດໝາຍໄດ້ກຳນົດໄວ້.
5. ໃຫ້ບໍລິການປິ່ນປົວຢູ່ສະຖານທີ່ຕ້ອງຫ້າມ ເຊັ່ນ: ສູນການຄ້າ, ຕະຫຼາດ, ຮ້ານຂາຍຢາ, ຮ້ານຂາຍຜະລິດຕະພັນການແພດ, ຮ້ານເຄື່ອງມື ແລະ ອຸປະກອນການແພດ ແລະ ສະຖານທີ່ ຕ້ອງຫ້າມອື່ນ ທີ່ກຳນົດໄວ້ໃນກົດໝາຍ.
6. ໃຫ້ບໍລິການປິ່ນປົວ ທີ່ບໍ່ໄດ້ຮັບອະນຸຍາດ, ນຳໃຊ້ວິທີການປິ່ນປົວ ທີ່ບໍ່ຖືກຮັບຮອງ ແລະ ບໍ່ສາມາດກວດກາໄດ້ຈາກຂະແໜງການສາທາລະນະສຸກ.
7. ດຳເນີນ, ຊຸກຍູ້, ສົ່ງເສີມການປິ່ນປົວ ທີ່ບໍ່ຖືກຕ້ອງຕາມຫຼັກວິຊາການແພດ ເຊັ່ນ: ການຫຼຸລູກໂດຍບໍ່ໄດ້ຮັບອະນຸຍາດ, ນຳໃຊ້ເຕັກນິກປິ່ນປົວ ທີ່ເປັນອັນຕະລາຍຕໍ່ສຸຂະພາບ.

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2019

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ດຣ ປອນແມກ ດາລາລອຍ